ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະການລົງທຶນ

ເລກທີ 2422 .../ກຜທ.ຣມສ-ຈສກ-10

ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2019

## ໜັງສືເຊີນ

ຮຽນ:.........................................................................................................

.........................................................................................ທີ່ນັບຖືຢ່າງສູງ,

**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມໂຕະມົນ ປະຈຳປີ 2019 ເຊິ່ງຈະຈັດຂຶ້ນໃນວັນທີ 25-26 ພະຈິກ 2019, ທີ່ຫ້ອງປະຊຸມໃຫຍ່ຂອງຫ້ອງວ່າການປົກຄອງແຂວງ, ແຂວງຫຼວງພະບາງ.**

- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 1836/ຫສນຍ, ລົງວັນທີ 15 ຕຸລາ 2019 ກ່ຽວກັບການເຫັນດີໃຫ້ຈັດກອງປະຊຸມໂຕມົນ ປະຈຳປີ 2019.

ກະຊວງແຜນການ ແລະ ການລົງທຶນ ໃນນາມຜູ້ປະຈຳການຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມ ກອງປະຊຸມໂຕະມົນ ປະຈຳປີ 2019 ພາຍໃຕ້ຫົວຂໍ້: *"ເພີ່ມທະວີການເປັນຄູ່ຮ່ວມເພື່ອເລັ່ງລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII ແລະ ການສ້າງແຜນພັດທະນາແຫ່ງຊາດ 5 ປີ ຄັ້ງທີ່ IX"* ທີ່ຈະຈັດຂຶ້ນໃນວັນທີ 25-26 ພະຈິກ 2019, ເວລາ 08:30-17:00 ໂມງ, ທີ່ ຫ້ອງປະຊຸມໃຫຍ່ຂອງຫ້ອງວ່າການປົກຄອງແຂວງ, ແຂວງຫຼວງພະບາງ. ຈຸດປະສົງຂອງກອງປະຊຸມແມ່ນເພື່ອ: ເພີ່ມທະວີການຮ່ວມມື ເພື່ອການພັດທະນາ ໂດຍສະເພາະປຶກສາຫາລືກ່ຽວກັບ ຄາດຄະເນຜົນກະທົບຈາກການຫຼຸດພົ້ນອອກຈາກ ສະຖານະພາບການເປັນປະເທດດ້ອຍພັດທະນາໃນໄລຍະຂ້າມຜ່ານ, ຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍ ເປົ້າໝາຍການພັດທະນາແບບຍືນຍົງ ໂດຍສະເພາະການຕິດຕາມ ແລະລາຍງານການຈັດຕັ້ງປະຕິບັດຕົວຊີ້ວັດຕ່າງໆ, ແຜນການການຟື້ນຟູພາຍຫຼັງໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ລວມທັງການສະໜັບສະໜູນດ້ານຕ່າງໆຢູ່ຂັ້ນ ສູນກາງ ແລະທ້ອງຖິ່ນ ແລະຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ຕໍ່ກັບການພັດທະນາຂອງ ສປປ ລາວ; ພ້ອມກັນນີ້, ກໍ່ຈະໄດ້ປຶກສາຫາລືກ່ຽວກັບ ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທີ່ສອດຄ່ອງກັບ ຂະບວນການຂຶ້ນແຜນງົບປະມານ.

ກອງປະຊຸມດັ່ງກ່າວ ຈະໄດ້ຮັບກຽດກ່າວເປີດໂດຍ ທ່ານ ປອ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ; ຫຼັງຈາກນັ້ນ, ທ່ານ ຮອງນາຍົກລັດຖະມົນ, ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ຈະສືບຕໍ່ເປັນປະທານກອງປະຊຸມຮ່ວມກັບ ທ່ານ ຄຳຂັນ ຈັນທະວິສຸກ, ເຈົ້າແຂວງແຂວງຫຼວງພະບາງ ແລະ ທ່ານນາງ Sara Sekkenes, ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ພ້ອມທັງມີຜູ້ເຂົ້າຮ່ວມລະດັບລັດຖະມົນຕີ/ຮອງລັດຖະມົນຕີ, ຄະນະຫ້ອງການ, ຄະນະກົມຈາກບັນດາກະຊວງ/ຂະແໜງການທີ່ກ່ຽວຂ້ອງ, ຄະນະພະແນກແຜນການ ແລະການລົງທຶນ ຈາກບັນດາແຂວງ, ບັນດາຄູ່ຮ່ວມພັດທະນາ ລວມທັງຜູ້ຕາງໜ້າຈາກອົງການຈັດຕັ້ງທາງສັງຄົມ ແລະພາກເອກະຊົນຈຳນວນໜຶ່ງ ເຂົ້າຮ່ວມກອງປະຊຸມດັ່ງກ່າວ (ລາຍລະອຽດໄດ້ຄັດຕິດວາລະກອງປະຊຸມມາພ້ອມນີ້).

ຮອງລັດຖະມົນຕີ

ປອ ກິແກ້ວ ຈັນທະບູຣີ

<u>ໝາຍເຫດ:</u>

ກະລຸນາຢືນຢັນການເຂົ້າຮ່ວມ

ຕິດຕໍ່: 021 222214, 223759-60 ແຟັກ: 021 223760